# ເພງ ສຂສັນວັນເກີດ

ແຕ່ງໂດຍ: ຫນູ ນິຣາວັນ

ຂໍອ່ວຍພອນຊັຍ ຂວັນໃຈສຸຂສັນວັນເກີດ
ມີສຸຂລ້ຳເລີດ ວັນເກີດສົດຊື່ນແຈ່ມໃສ
ຝາກເປັນສຽງເພງ ບັນເລງຮ້ອງສົ່ງຈາກໃຈ
ຄວາມຫວັງມຸ້ງຫມັ້ນໃດໆ ຂໍໃຫ້ສົມຫວັງສົມປອງ

ບໍ່ມີຂອງຂວັນ ສົ່ງພອນຝາກລົມມາຫາ
ສຸຂລົ້ນອຸຣາ ສົມປາຖນາເຖີດນ້ອງ
ຂໍສິ່ງສັກສິດ ສະຖິດປົກປ້ອງຄຸ້ມຄອງ
ປອດພັຍໂຣຄາທັງປວງ ຂໍນ້ອງສົດຊື່ນຊີວີ

Joyeux Anniversaire Joyeux Anniversaire
ມອບຈາກໃຈແທ້ ໃຫ້ແກ່ຍອດຂວັນຊີວີ
ຢ່າມີຫມອງຫມົ່ນ ສັບສົນກັງວົນຮີດີ
ຂໍໃຫ້ຄອງຄວາມສຸຂີ ທັງປີໂຊກດີຖາວອນ

ສຸຂສັນວັນເກີດ ພອນປະເສີດທົ່ວທັງໂລກາ
ຂໍວອນເທວາ ຈົ່ງມາອຳນວຍອ່ວຍພອນ
ໃຫ້ຄວາມສຸຂີ ຄືນດີຊົ່ວນິຣັນດອນ
ສວັນຈົ່ງປະທານພອນ ສີພັນດອນ  ຂໍໃຫ້ໂຊກດີ
ສວັນຈົ່ງປະທານພອນ ສີພັນດອນ  Happy Birthday

ຈັດພິມໂດຍ: ຫນູ ນິຣາວັນ